ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 580 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 15-5-2020

ດ່ວນທີ່ສຸດ

# ແຈ້ງການ

ຮຽນ: - ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ.

ເລື່ອງ: ການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ ແລະ ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ໃນໄລຍະແຕ່ວັນທີ 18 ພຶດສະພາ ຫາ 01 ມິຖຸນາ 2020.

- ອີງຕາມຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020;
- ອີງຕາມການລາຍງານສະພາບການລະບາດ ຂອງພະຍາດ COVID-19 ຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງ COVID-19 ໃນວັນທີ 14 ພຶດສະພາ 2020;
- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ເປີດກວ້າງ (ຮ່ວມກັບຄະນະສະເພາະກິດ, ກະຊວງທີ່ກ່ຽວຂ້ອງ ແລະ ນະຄອນຫຼວງວຽງຈັນ) ໃນວັນທີ 14 ພຶດສະພາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບດັ່ງນີ້: ການແຜ່ລະບາດ ຂອງພະຍາດ COVID-19 ຍັງສືບຕໍ່ເພີ່ມຂຶ້ນ ແລະ ເປັນໄພຄຸກຄາມຕໍ່ໂລກ ມີຜູ້ຕິດເຊື້ອ ຫຼາຍລ້ານຄົນ, ມີຜູ້ເສຍຊີວິດເປັນຈຳນວນຫຼາຍ ແລະ ຍັງມີທ່າອ່ຽງເພີ່ມຂຶ້ນເລື້ອຍໆ, ຊຶ່ງຍັງບໍ່ຮູ້ໄດ້ວ່າ ເວລາໃດ ຈຶ່ງຈະສາມາດຢັບຢັ້ງ ແລະ ຢຸດຕິມັນໄດ້, ອັນໄດ້ສ້າງຜົນກະທົບຢ່າງໜັກໜ່ວງຕໍ່ເສດຖະກິດ ແລະ ສັງຄົມ ໃນທົ່ວໂລກ. ສຳລັບຢູ່ປະເທດພວກເຮົາ, ຜ່ານການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020, ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 524/ຫສນຍ, ລົງວັນທີ 01 ພຶດສະພາ 2020, ບັນດານິຕິກຳ ແລະ ຄຳແນະນຳ ຂອງຄະນະສະເພາະກິດ ແລະ ພາກສ່ວນກ່ຽວຂ້ອງ, ພວກເຮົາ ສາມາດຄວບຄຸມການແຜ່ລະບາດໄວ້ໄດ້ ໂດຍບໍ່ມີຜູ້ຕິດເຊື້ອເພີ່ມ ແລະ ສາມາດປິ່ນປົວຜູ້ຕິດເຊື້ອຫາຍດີແລ້ວ ຈຳນວນ 14 ຄົນ (ໃນຈຳນວນຜູ້ຕິດເຊື້ອທັງໝົດ 19 ຄົນ), ບັນດາອົງການຈັດຕັ້ງສາກົນ ແລະ ປະເທດຕ່າງໆ ໄດ້ຕີລາຄາສູງວ່າ ສປປ ລາວ ມີມາດຕະການປ້ອງກັນແຕ່ຫົວທີ ແລະ ປະຕິບັດມາດຕະການຕ່າງໆ ໄດ້ເປັນຢ່າງດີ ຈຶ່ງສາມາດຄວບຄຸມບໍ່ໃຫ້ມີການແຜ່ລະບາດອອກສູ່ວົງກວ້າງ.

ເຖິງແນວໃດກໍຕາມ, ພວກເຮົາ ກໍບໍ່ຄວນຖືເບົາ ແລະ ປະໝາດຢ່າງເດັດຂາດ ເນື່ອງຈາກໃນຕໍ່ໜ້າຍັງມີຄວາມສ່ຽງສູງ ແລະ ສິ່ງທ້າທາຍຈຳນວນບໍ່ໜ້ອຍ ທີ່ຈະເກີດມີການລະບາດອີກຮອບໃໝ່ ຍ້ອນສະພາບການລະບາດ ຢູ່ຫຼາຍປະເທດ ຍັງເພີ່ມຂຶ້ນຕໍ່ເນື່ອງ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19. ແຕ່ເພື່ອເຮັດໃຫ້ມີຜົນກະທົບຕໍ່ເສດຖະກິດ-ສັງຄົມ ໜ້ອຍທີ່ສຸດ ແລະ ໃຫ້ສັງຄົມ ສາມາດກັບມາໃຊ້ຊີວິດ ເປັນປົກກະຕິ ເທື່ອລະກ້າວ, ລັດຖະບານໄດ້ຕົກລົງ ແລະ ຊີ້ນຳ ດັ່ງນີ້: